ເລກທີ 020/SVN/2016

ນະຄອນຫຼວງວຽງຈັນ, ວັນທີ 11/03/2016

ມະຕິກອງປະຊຸມ ສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 1/2016

ກອງປະຊຸມສະພາບໍລິຫານ ສ.ວ.ນ ຄັ້ງທີ 1/2016 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 11 ມີນາ 2016 ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສາຂາສີໄຄ ບ້ານ ນາແຮ່, ເມືອງ ສີໂຄຕະບອງ, ນະຄອນຫຼວງ ວຽງຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ອຸ່ນ ຫຼ້າສຸກັນ ປະທານສະພາບໍລິຫານບໍລິສັດ ແລະ ບັນດາສະມາຊິກສະພາບໍລິຫານເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລື ແລະ ໄດ້ມີມະຕິສຳຄັນ ໂດຍມີລາຍລະອຽດດັ່ງນີ້:

1. ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີ 25 ມີນາ 2016 ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2015 ພ້ອມທັງກຳນົດເອົາວັນທີ 25 ມີນາ 2016 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນທີ່ມີ ສິດຮັບເງິນປັນຜົນຈາກຜົນປະກອບການປີ 2015. ແຕ່ການຈ່າຍເງິນປັນຜົນຈາກຜົນປະກອບການປະຈຳປີ 2015 ຈະຕ້ອງໄດ້ຮັບການອະນຸມັດຈາກທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເສຍກ່ອນ.
2. ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2015 ແລະ ຮ່າງບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2015 ແຕ່ ຮ່າງບົດລາຍງານການເງິນຂອງບໍລິສັດອາດມີການປ່ຽນແປງອີກ ໂດຍຜ່ານ ການກວດສອບ ຈາກບໍລິສັດພຣາຍສ໌ວໍເຕີ້ເຮົ້າສ໌ກຸບເປີ໊ສ (ລາວ) ຈຳກັດ ເປັນຜູ້ກວດສອບບັນຊີພາຍນອກ ກ່ອນໃຫ້ນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2015 ແລະ ບົດລາຍງານການເງິນຂອງ ບໍລິສັດປະຈຳປີ 2015 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ ໄປ.
3. ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2016 ແລະ ໃຫ້ນຳແຜນການດຳເນີນທຸລະກິດຂອງ ບໍລິສັດປະຈຳປີ 2016 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ ໄປ.
4. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນປະກອບ ການປີ 2015 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ໃນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ແມ່ນວັນທີ 25 ມີນາ 2016 ໃນອັດຕາ 50 ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມ ຕາມ ນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ ແຕ່ບໍ່ຫຼຸດ 40 ກີບຕໍ່ຮຸ້ນ ເຊິ່ງອັດຕາທີ່ແນ່ນອນ ແລະ ກຳນົດວັນ ຈ່າຍເງິນປັນຜົນແມ່ນມອບໃຫ້ ຜູ້ອຳນວຍການໃຫຍ່ເປັນຜູ້ຕັດສິນໃຈ ແລະ ແຈ້ງຜູ້ຖືຮຸ້ນຊາບ ຜ່ານຊ່ອງທາງ ສື່ສານຂອງຕະຫຼາດຫຼັກຊັບລາວ.
5. ເຫັນດີໃຫ້ສະເໜີແກ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ ເຮົ້າສ໌ກຸເປີ໊ສ (ລາວ) ຈຳກັດ ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2016 ໂດຍມີຄ່າຈ້າງເປັນ ເງິນຈຳນວນ 50,000 ໂດລາສະຫະລັດ ຕໍ່ປີ.